ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------=== 000 ===---

ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ

ເລກທີ 014 /ຄລຕ.

ນະຄອນຫຼວງວຽງຈັນ, ວັນທີ 19/05/2011

# ຂໍ້ຕົກລົງ
# ວ່າດ້ວຍລະບຽບການເປີດເຜີຍຂໍ້ມູນ

- ອີງຕາມດຳລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ ສະບັບເລກທີ 255/ນຍ, ລົງວັນທີ 24 ພຶດສະພາ 2010;
- ອີງຕາມການສະເໜີ ຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ຕໍ່ກອງປະຊຸມ ຄລຕ ຄັ້ງທີ VIII, ວັນທີ 29 ເມສາ 2011.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ອອກຂໍ້ຕົກລົງ:**

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ຜັນຂະຫຍາຍພາກທີ VI ມາດຕາ 59 ຂອງດຳລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ ສະບັບເລກທີ 255/ນຍ, ລົງວັນທີ 24 ພຶດສະພາ 2010 ຊຶ່ງກຳນົດຫຼັກການເພີ່ມເຕີມ ເພື່ອເຮັດໃຫ້ການເປີດເຜີຍຂໍ້ມູນຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ.

**ມາດຕາ 2. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ຕໍ່ ບໍລິສັດອອກຫຼັກຊັບ, ບໍລິສັດຫຼັກຊັບ ແລະ ຕະຫຼາດຫຼັກຊັບ ທີ່ເຄື່ອນໄຫວທຸລະກິດ ຢູ່ ສປປ ລາວ.

**ມາດຕາ 3. ຫຼັກການລວມ**

ການເປີດເຜີຍຂໍ້ມູນ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ;
2. ດຳເນີນພ້ອມກັບການລາຍງານໃຫ້ສຳນັກງານ ຄລຕ ຢ່າງເປັນລາຍລັກອັກສອນ;
3. ຮັບປະກັນຄວາມສະເໝີພາບ ໃນການເຂົ້າເຖິງຂໍ້ມູນຂອງມວນຊົນທົ່ວໄປ;
4. ຂໍ້ມູນທີ່ເປີດເຜີຍ ຕ້ອງເປັນພາສາລາວ.

**ມາດຕາ 4. ພັນທະໃນການເປີດເຜີຍຂໍ້ມູນ**

ບໍລິສັດອອກຫຼັກຊັບ, ບໍລິສັດຫຼັກຊັບ ແລະ ຕະຫຼາດຫຼັກຊັບ ມີພັນທະເປີດເຜີຍຂໍ້ມູນຂອງຕົນ ຕາມທີ່ໄດ້ກໍານົດໄວ້ໃນ ໝວດທີ II, ໝວດທີ III ແລະ ໝວດທີ IV ຂອງຂໍ້ຕົກລົງສະບັບນີ້ຕໍ່ມວນຊົນ ແລະ ຕ້ອງຮັບຜິດຊອບຕໍ່ເນື້ອໃນຂອງຂໍ້ມູນທີ່ໄດ້ເປີດເຜີຍນັ້ນ.

**ມາດຕາ 5. ຜູ້ຮັບຜິດຊອບເປີດເຜີຍຂໍ້ມູນ**

ບໍລິສັດອອກຫຼັກຊັບ, ບໍລິສັດຫຼັກຊັບ ແລະ ຕະຫຼາດຫຼັກຊັບ ຕ້ອງແຕ່ງຕັ້ງໃຫ້ບຸກຄົນໃດໜຶ່ງຮັບຜິດຊອບໃນການເປີດເຜີຍຂໍ້ມູນຕໍ່ມວນຊົນ ແລະ ແຈ້ງລາຍຊື່ບຸກຄົນດັ່ງກ່າວ ໃຫ້ສໍານັກງານ ຄລຕ ຊາບ ເປັນລາຍລັກອັກສອນ ພາຍໃນ ຫ້າ ວັນລັດຖະການ ນັບແຕ່ວັນແຕ່ງຕັ້ງເປັນຕົ້ນໄປ.

ກໍລະນີ ມີການປ່ຽນແປງ ຫຼື ແຕ່ງຕັ້ງເພີ່ມເຕີມ ຕ້ອງແຈ້ງໃຫ້ສໍານັກງານ ຄລຕ ຊາບເປັນລາຍລັກອັກສອນ ພາຍໃນ ຫ້າ ວັນລັດຖະການ ນັບແຕ່ວັນມີການປ່ຽນແປງ ຫຼື ແຕ່ງຕັ້ງເພີ່ມເຕີມ ເປັນຕົ້ນໄປ.

**ມາດຕາ 6. ການເປີດເຜີຍຂໍ້ມູນ**

ການເປີດເຜີຍຂໍ້ມູນ ປະກອບມີ ສາມ ຮູບແບບຄື: ເປີດເຜີຍຂໍ້ມູນແບບປົກກະຕິ, ເປີດເຜີຍຂໍ້ມູນແບບສຸກເສີນ ແລະ ເປີດເຜີຍຂໍ້ມູນຕາມການຮຽກຮ້ອງ.

ການເປີດເຜີຍຂໍ້ມູນ ຕ້ອງເປີດເຜີຍຜ່ານເວັບໄຊຂອງຕະຫຼາດຫຼັກຊັບ, ເວັບໄຊຂອງສໍານັກງານ ຄລຕ ແລະ ສື່ສິ່ງພິມ.

ກໍລະນີ ເປີດເຜີຍຜ່ານສື່ສິ່ງພິມ ຕ້ອງຂໍອະນຸຍາດຈາກສໍານັກງານ ຄລຕ.

ບໍລິສັດອອກຫຼັກຊັບ ແລະ ບໍລິສັດຫຼັກຊັບ ຕ້ອງສະໜອງຂໍ້ມູນຕາມທີ່ໄດ້ກໍານົດໄວ້ໃນໝວດທີ II ແລະ ໝວດທີ III ຂອງຂໍ້ຕົກລົງສະບັບນີ້ ໃຫ້ຕະຫຼາດຫຼັກຊັບ ແລະ ສໍານັກງານ ຄລຕ ເພື່ອນໍາໄປເປີດເຜີຍຕໍ່ມວນຊົນ.

**ມາດຕາ 7. ການເກັບຮັກສາຂໍ້ມູນ**

ບໍລິສັດອອກຫຼັກຊັບ, ບໍລິສັດຫຼັກຊັບ ແລະ ຕະຫຼາດຫຼັກຊັບ ຕ້ອງເກັບຮັກສາຂໍ້ມູນທີ່ໄດ້ເປີດເຜີຍຢ່າງໜ້ອຍ ສິບ ປີ.

## ໝວດທີ II
## ການເປີດເຜີຍຂໍ້ມູນຂອງບໍລິສັດອອກຫຼັກຊັບ

**ມາດຕາ 8. ການເປີດເຜີຍຂໍ້ມູນແບບປົກກະຕິ**

ບໍລິສັດອອກຫຼັກຊັບ ຕ້ອງເປີດເຜີຍຂໍ້ມູນເປັນປົກກະຕິປະຈໍາໄຕມາດ, ຫົກເດືອນຕົ້ນປີ ແລະ ປະຈໍາປີ.

**1. ການເປີດເຜີຍຂໍ້ມູນປະຈຳໄຕມາດ**

ບໍລິສັດອອກຫຼັກຊັບ ຕ້ອງເປີດເຜີຍຂໍ້ມູນປະຈຳໄຕມາດ ພາຍໃນ ສິບຫ້າ ວັນ ນັບແຕ່ວັນສິ້ນສຸດໄຕມາດ. ກໍລະນີ ບໍລິສັດອອກຫຼັກຊັບເປັນກຸ່ມບໍລິສັດ ຕ້ອງເປີດເຜີຍ ພາຍໃນ ສາມສິບ ວັນ ພາຍຫຼັງສິ້ນສຸດໄຕມາດ.

ຂໍ້ມູນທີ່ຕ້ອງເປີດເຜີຍປະຈຳໄຕມາດ ແມ່ນເອກະສານລາຍງານການເງິນ ຊຶ່ງປະກອບດ້ວຍ:

1) ໃບສະຫຼຸບຊັບສົມບັດ;
2) ໃບລາຍງານຜົນໄດ້ຮັບ;
3) ໃບລາຍງານກະແສເງິນສົດລວມ;
4) ບົດອະທິບາຍກ່ຽວກັບຫຼັກການ, ວິທີການ ດ້ານການບັນຊີທີ່ໄດ້ນຳໃຊ້ ແລະ ອື່ນໆ.

**2. ການເປີດເຜີຍຂໍ້ມູນຫົກເດືອນຕົ້ນປີ**

ບໍລິສັດອອກຫຼັກຊັບ ຕ້ອງເປີດເຜີຍຂໍ້ມູນປະຈຳຫົກເດືອນຕົ້ນປີ ພາຍໃນ ສີ່ສິບຫ້າ ວັນ ນັບແຕ່ວັນສິ້ນສຸດໄຕມາດທີສອງ. ກໍລະນີ ບໍລິສັດອອກຫຼັກຊັບເປັນກຸ່ມບໍລິສັດ ຕ້ອງເປີດເຜີຍຂໍ້ມູນ ພາຍໃນ ຫົກສິບ ວັນ ພາຍຫຼັງສິ້ນສຸດໄຕມາດທີສອງ.

ຂໍ້ມູນທີ່ຕ້ອງເປີດເຜີຍປະຈຳຫົກເດືອນຕົ້ນປີ ແມ່ນເອກະສານລາຍງານການເງິນທີ່ໄດ້ຮັບການທົບທວນ ແລະ ປະກອບຄຳເຫັນຈາກຜູ້ກວດສອບພາຍນອກ ທີ່ຖືກຮັບຮອງ ໂດຍສຳນັກງານ ຄລຕ ຊຶ່ງປະກອບດ້ວຍ:

1) ໃບສະຫຼຸບຊັບສົມບັດ;
2) ໃບລາຍງານຜົນໄດ້ຮັບ;
3) ໃບລາຍງານກະແສເງິນສົດລວມ;
4) ໃບລາຍງານສ່ວນປ່ຽນແປງຂອງທຶນ;
5) ບົດອະທິບາຍກ່ຽວກັບຫຼັກການ, ວິທີການ ດ້ານການບັນຊີທີ່ໄດ້ນຳໃຊ້ ແລະ ອື່ນໆ.

**3. ການເປີດເຜີຍຂໍ້ມູນປະຈຳປີ**

ບໍລິສັດອອກຫຼັກຊັບ ຕ້ອງເປີດເຜີຍຂໍ້ມູນປະຈຳປີ ພາຍໃນ ໜຶ່ງຮ້ອຍຊາວ ວັນ ພາຍຫຼັງສິ້ນສຸດປີການບັນຊີ.

ຂໍ້ມູນທີ່ຕ້ອງເປີດເຜີຍປະຈຳປີ ແມ່ນເອກະສານລາຍງານການເງິນ ທີ່ໄດ້ຮັບການກວດສອບຈາກຜູ້ກວດສອບພາຍນອກ ທີ່ຖືກຮັບຮອງ ໂດຍສຳນັກງານ ຄລຕ ຊຶ່ງປະກອບດ້ວຍ:

1) ບົດລາຍງານຜົນການດຳເນີນທຸລະກິດ;
2) ໃບສະຫຼຸບຊັບສົມບັດ;
3) ໃບລາຍງານຜົນໄດ້ຮັບ;
4) ໃບລາຍງານກະແສເງິນສົດລວມ;
5) ໃບລາຍງານສ່ວນປ່ຽນແປງຂອງທຶນ;

6) ບົດອະທິບາຍ ກ່ຽວກັບຫຼັກການ, ວິທີການ ດ້ານການບັນຊີທີ່ໄດ້ນຳໃຊ້ ແລະ ອື່ນໆ.

## ມາດຕາ 9. ການເປີດເຜີຍຂໍ້ມູນແບບສຸກເສີນ

ບໍລິສັດອອກຫຼັກຊັບ ຕ້ອງເປີດເຜີຍຂໍ້ມູນແບບສຸກເສີນ ພາຍໃນ ຊາວສີ່ ຊົ່ວໂມງ ນັບແຕ່ເວລາເກີດມີເຫດການໃດໜຶ່ງ ດັ່ງນີ້:

1. ບັນຊີເງິນຝາກຂອງບໍລິສັດອອກຫຼັກຊັບ ຢູ່ທະນາຄານຖືກອາຍັດຊົ່ວຄາວ ຫຼື ພາຍຫຼັງບັນຊີເງິນຝາກໄດ້ຮັບອະນຸຍາດໃຫ້ເຄື່ອນໄຫວຄືນ;
2. ໂຈະ ຫຼື ຢຸດເຊົາ ການດຳເນີນທຸລະກິດ ບາງສ່ວນ ຫຼື ທັງໝົດ;
3. ຖືກຖອນ ໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດສ້າງຕັ້ງ ແລະ ເຄື່ອນໄຫວ;
4. ມະຕິຂອງສະພາບໍລິຫານ ກ່ຽວກັບການຊື້ຮຸ້ນຄືນຂອງບໍລິສັດຕົນ ຫຼື ຂາຍຮຸ້ນຈຳນວນໜຶ່ງທີ່ໄດ້ຊື້ຄືນ;
5. ສະມາຊິກສະພາບໍລິຫານ, ຄະນະຜູ້ອຳນວຍການ, ຫົວໜ້າບັນຊີ ແລະ ຫົວໜ້າການເງິນ ຖືກລົງວິໄນ ຫຼື ດຳເນີນຄະດີ ເນື່ອງຈາກລະເມີດລະບຽບກົດໝາຍ;
6. ມະຕິກອງປະຊຸມຜູ້ຖືຮຸ້ນ ກ່ຽວກັບການແບ່ງເງິນປັນຜົນ;
7. ການປ່ຽນແປງ ສະພາບໍລິຫານ, ຄະນະກຳມະການກວດກາ, ຄະນະຜູ້ອຳນວຍການ, ຫົວໜ້າບັນຊີ, ຫົວໜ້າການເງິນ ແລະ ຜູ້ຖືຮຸ້ນລາຍໃຫຍ່;
8. ການຊື້-ຂາຍຮຸ້ນ ຂອງສະມາຊິກສະພາບໍລິຫານ, ຄະນະກຳມະການກວດກາ, ຄະນະຜູ້ອຳນວຍການ, ຫົວໜ້າບັນຊີ ແລະ ຫົວໜ້າການເງິນ;
9. ບໍລິສັດອອກຫຼັກຊັບ ຢູ່ໃນສະພາວະລົ້ມລະລາຍ ຫຼື ສານມີຄຳຕັດສິນໃຫ້ບໍລິສັດອອກຫຼັກຊັບເປັນວິສາຫະກິດລົ້ມລະລາຍ;
10. ມະຕິກອງປະຊຸມຜູ້ຖືຮຸ້ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 144 ຂອງກົດໝາຍວ່າດ້ວຍວິສາຫະກິດ.

ບໍລິສັດອອກຫຼັກຊັບ ຕ້ອງເປີດເຜີຍຂໍ້ມູນສຸກເສີນ ພາຍໃນ ເຈັດສິບສອງ ຊົ່ວໂມງ ນັບແຕ່ເວລາເກີດມີເຫດການໃດໜຶ່ງ ດັ່ງນີ້:

1. ມະຕິຕົກລົງກ່ຽວກັບການກູ້ເງິນ ທີ່ມີມູນຄ່າແຕ່ ສິບສ່ວນຮ້ອຍ ຂອງທຶນຈົດທະບຽນຂອງບໍລິສັດ;
2. ມະຕິກອງປະຊຸມຜູ້ຖືຮຸ້ນ ໃນການຮັບຮອງເອົາແຜນການທຸລະກິດປະຈຳປີ, ແຜນການຂະຫຍາຍທຸລະກິດໄລຍະກາງ-ຍາວ ແລະ ຍຸດທະສາດຂອງບໍລິສັດ ແລະ ການປ່ຽນແປງຫຼັກການ, ວິທີການ ດ້ານການບັນຊີທີ່ໄດ້ນຳໃຊ້;
3. ມະຕິຕົກລົງກ່ຽວກັບການສ້າງຕັ້ງ ຫຼື ຍຸບເລີກສາຂາ.

## ມາດຕາ 10. ການເປີດເຜີຍຂໍ້ມູນຕາມການຮຽກຮ້ອງ

ບໍລິສັດອອກຫຼັກຊັບ ຕ້ອງເປີດເຜີຍຂໍ້ມູນ ຕາມການຮຽກຮ້ອງຂອງສຳນັກງານ ຄລຕ ໃນກໍລະນີ ທີ່ມີເຫດການໃດໜຶ່ງ ທີ່ສົ່ງ ຫຼື ອາດສົ່ງຜົນກະທົບເຖິງຜົນປະໂຫຍດ ຂອງນັກລົງທຶນ, ຕໍ່ລາຄາຫຼັກຊັບ ຫຼື ສະຖຽນລະພາບ ຂອງຕະຫຼາດທຶນ.

## ໝວດທີ III
## ການເປີດເຜີຍຂໍ້ມູນຂອງບໍລິສັດຫຼັກຊັບ

**ມາດຕາ 11. ການເປີດເຜີຍຂໍ້ມູນແບບປົກກະຕິ**

ບໍລິສັດຫຼັກຊັບ ຕ້ອງເປີດເຜີຍຂໍ້ມູນປະຈໍາປີ ພາຍໃນ ໜຶ່ງຮ້ອຍຊາວ ວັນ ພາຍຫຼັງສິ້ນສຸດປີການບັນຊີ.

ຂໍ້ມູນທີ່ຕ້ອງເປີດເຜີຍປະຈໍາປີ ແມ່ນເອກະສານລາຍງານການເງິນ ທີ່ໄດ້ຮັບການກວດສອບຈາກຜູ້ກວດສອບພາຍນອກ ທີ່ຖືກຮັບຮອງໂດຍສໍານັກງານ ຄລຕ ຊຶ່ງປະກອບດ້ວຍ:

1. ບົດລາຍງານຜົນການດໍາເນີນທຸລະກິດ;
2. ໃບສະຫຼຸບຊັບສິນບັດ;
3. ໃບລາຍງານຜົນໄດ້ຮັບ;
4. ໃບລາຍງານກະແສເງິນສົດລວມ;
5. ໃບລາຍງານສ່ວນປ່ຽນແປງຂອງທຶນ;
6. ບົດອະທິບາຍ ກ່ຽວກັບຫຼັກການ, ວິທີການ ດ້ານການບັນຊີທີ່ໄດ້ນໍາໃຊ້ ແລະ ອື່ນໆ.

**ມາດຕາ 12. ການເປີດເຜີຍຂໍ້ມູນແບບສຸກເສີນ**

ບໍລິສັດຫຼັກຊັບ ຕ້ອງເປີດເຜີຍຂໍ້ມູນແບບສຸກເສີນ ພາຍໃນ ຊາວສີ່ ຊົ່ວໂມງ ນັບແຕ່ເວລາເກີດມີເຫດການໃດໜຶ່ງ ດັ່ງນີ້:

1. ສະມາຊິກສະພາບໍລິຫານ, ຄະນະຜູ້ອໍານວຍການ, ຫົວໜ້າບັນຊີ, ຫົວໜ້າການເງິນ ແລະ ນັກວິຊາຊີບທຸລະກິດຫຼັກຊັບ ຖືກລົງວິໄນ ຫຼື ຖືກດໍາເນີນຄະດີ;
2. ບັນຊີເງິນຝາກຂອງບໍລິສັດຫຼັກຊັບໃນທະນາຄານ ຖືກງົດຊົ່ວຄາວ ຫຼື ພາຍຫຼັງບັນຊີເງິນຝາກໄດ້ຮັບອະນຸຍາດໃຫ້ເຄື່ອນໄຫວຄືນ;
3. ໂຈະ ຫຼື ຢຸດເຊົາການດໍາເນີນທຸລະກິດ ບາງສ່ວນ ຫຼື ທັງໝົດ;
4. ບໍລິສັດຢູ່ໃນສະພາວະລົ້ມລະລາຍ ຫຼື ສານມີຄໍາຕັດສິນໃຫ້ບໍລິສັດເປັນວິສາຫະກິດລົ້ມລະລາຍ;
5. ຖືກຖອນໃບອະນຸຍາດສ້າງຕັ້ງ ແລະ ການເຄື່ອນໄຫວທຸລະກິດ;
6. ກອງປະຊຸມຜູ້ຖືຮຸ້ນ ມີມະຕິຄວບກິດຈະການກັບວິສາຫະກິດອື່ນ;
7. ການປ່ຽນແປງສະມາຊິກສະພາບໍລິຫານ, ຄະນະຜູ້ອໍານວຍການ, ຫົວໜ້າບັນຊີ, ຫົວໜ້າການເງິນ, ຫົວໜ້າສາຂາ, ຮອງຫົວໜ້າສາຂາ ແລະ ຫົວໜ້າໜ່ວຍບໍລິການ;
8. ການປ່ຽນແປງ ຫຼື ເພີ່ມເຕີມກົດລະບຽບຂອງບໍລິສັດ;
9. ມະຕິຕົກລົງກ່ຽວກັບການສ້າງຕັ້ງ ຫຼື ຍຸບເລີກສາຂາ, ໜ່ວຍບໍລິການຊື້-ຂາຍຫຼັກຊັບ ຫຼື ປ່ຽນແປງທີ່ຕັ້ງສໍານັກງານໃຫຍ່, ສາຂາ ແລະ ໜ່ວຍບໍລິການຊື້-ຂາຍຫຼັກຊັບ;
10. ພະນັກງານໃດໜຶ່ງ ຖືກຖອນໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ.

**ມາຕາຕາ 13. ການເປີດເຜີຍຂໍ້ມູນຕາມການຮຽກຮ້ອງ**

ບໍລິສັດຫຼັກຊັບ ຕ້ອງເປີດເຜີຍຂໍ້ມູນຕາມການຮຽກຮ້ອງ ຂອງສຳນັກງານ ຄລຕ ໃນກໍລະນີຂໍ້ມູນທີ່ຕິດພັນກັບບໍລິສັດນັ້ນ ຫາກສົ່ງຜົນກະທົບຕໍ່ຜົນປະໂຫຍດຂອງນັກລົງທຶນ.

## ໝວດທີ IV
## ການເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບ

**ມາດຕາ 14. ການເປີດເຜີຍຂໍ້ມູນແບບປົກກະຕິ**

ຕະຫຼາດຫຼັກຊັບ ຕ້ອງເປີດເຜີຍຂໍ້ມູນແບບປົກກະຕິ ດັ່ງນີ້:

**1. ຂໍ້ມູນການຊື້-ຂາຍຫຼັກຊັບ**

1) ຊື່, ປະເພດ ແລະ ຈຳນວນ ຫຼັກຊັບຂອງແຕ່ລະບໍລິສັດ ທີ່ໄດ້ຮັບອະນຸຍາດໃຫ້ຊື້-ຂາຍໃນຕະຫຼາດຫຼັກຊັບ ພ້ອມທັງເຄື່ອງໝາຍການຂຶ້ນລົງຂອງຫຼັກຊັບດັ່ງກ່າວ;
2) ລາຄາປິດຂອງວັນຜ່ານມາ, ລາຄາເປີດ ແລະ ລາຄາປິດຂອງແຕ່ລະຊ່ວງ ລວມທັງປະລິມານ, ມູນຄ່າການຊື້-ຂາຍ ແລະ ມູນຄ່າຕະຫຼາດຂອງແຕ່ລະຊ່ວງ. ກໍລະນີ ນຳໃຊ້ລະບົບຈັບຄູ່ຊື້-ຂາຍແບບຕໍ່ເນື່ອງ ຕ້ອງສະແດງລະດັບການເໜັງຕີງຂອງລາຄາຫຼັກຊັບ ພ້ອມທັງປະລິມານ, ມູນຄ່າ ແລະ ມູນຄ່າຕະຫຼາດ ພາຍໃນໄລຍະທີ່ດຳເນີນການຊື້-ຂາຍ;
3) ດັດສະນີຂອງວັນຜ່ານມາ, ດັດສະນີເປີດ-ປິດ ໃນແຕ່ຊ່ວງຊື້-ຂາຍ ລວມທັງການປ່ຽນແປງ ແລະ ສ່ວນຮ້ອຍຂອງການປ່ຽນແປງ. ກໍລະນີ ນຳໃຊ້ລະບົບຈັບຄູ່ຊື້-ຂາຍແບບຕໍ່ເນື່ອງ ຕ້ອງເປີດເຜີຍລະດັບການເໜັງຕີງຂອງດັດສະນີ ພາຍໃນໄລຍະທີ່ດຳເນີນການຊື້-ຂາຍ;
4) ລາຄາ ແລະ ປະລິມານສະເໜີຊື້-ຂາຍຫຼັກຊັບ ສາມ ລະດັບທີ່ດີທີ່ສຸດ, ປະລິມານ ແລະ ລາຄາທີ່ຖືກຈັບຄູ່, ລາຄາສູງສຸດ ແລະ ຕໍ່າສຸດ;
5) ສະຖານະພາບຂອງແຕ່ລະຫຼັກຊັບຈົດທະບຽນ;
6) ລາຍລະອຽດຂອງຫຼັກຊັບທີ່ມີປະລິມານຊື້-ຂາຍຫຼາຍທີ່ສຸດ ແລະ ຫຼັກຊັບທີ່ມີລາຄາເໜັງຕີງແຮງທຽບໃສ່ວັນຜ່ານມາ;
7) ລາຍລະອຽດຂອງຫຼັກຊັບທີ່ມີລາຄາຈົດທະບຽນສູງສຸດ ແລະ ລາຄາຕະຫຼາດສູງສຸດຂອງສາມ ອັນດັບທຳອິດ;
8) ບັນຊີລາຍຊື່ຂອງສະມາຊິກຂອງຕະຫຼາດຫຼັກຊັບ ແລະ ສູນຮັບຝາກຫຼັກຊັບ;
9) ການປ່ຽນແປງຊົ່ວໂມງຊື້-ຂາຍ;
10) ການຢຸດຮັບຄຳສັ່ງຊື້-ຂາຍ ແລະ ຍົກເລີກຄຳສັ່ງຊື້-ຂາຍ ພາຍໃນໄລຍະທີ່ດຳເນີນການຊື້-ຂາຍ;
11) ການຢຸດການຊື້-ຂາຍຫຼັກຊັບໃດໜຶ່ງຊົ່ວຄາວ, ການປິດໃຫ້ບໍລິການບາງສ່ວນ ຫຼື ການປິດຕະຫຼາດຫຼັກຊັບໂດຍເຫດຜົນໃດໜຶ່ງ.

2. ຂໍ້ມູນກ່ຽວກັບບໍລິສັດຈົດທະບຽນ

ຕະຫຼາດຫຼັກຊັບ ຕ້ອງເປີດເຜີຍຂໍ້ມູນຂອງບໍລິສັດຈົດທະບຽນ ຕາມທີ່ໄດ້ກໍານົດໃນ ໝວດທີ II ຂອງຂໍ້ຕົກລົງສະບັບນີ້ ແລະ ຕ້ອງເປີດເຜີຍຂໍ້ມູນເພີ່ມເຕີມ ດັ່ງນີ້:

1) ການຈົດທະບຽນ;

2) ການປ່ຽນແປງ, ຍົກເລີກ ແລະ ການຈົດທະບຽນຄືນໃໝ່;

3) ການປະຕິບັດມາດຕະການໂດຍຕະຫຼາດຫຼັກຊັບຕໍ່ກັບບໍລິສັດຈົດທະບຽນ.

3. ຂໍ້ມູນກ່ຽວກັບບໍລິສັດຫຼັກຊັບ ທີ່ເປັນສະມາຊິກຂອງຕະຫຼາດຫຼັກຊັບ

ຕະຫຼາດຫຼັກຊັບ ຕ້ອງເປີດເຜີຍຂໍ້ມູນຂອງບໍລິສັດຫຼັກຊັບ ຕາມທີ່ໄດ້ກໍານົດໃນ ໝວດທີ III ຂອງຂໍ້ຕົກລົງສະບັບນີ້ ແລະ ຕ້ອງເປີດເຜີຍຂໍ້ມູນເພີ່ມເຕີມ ດັ່ງນີ້:

1) ການຮັບສະມາຊິກ;

2) ການປະຕິບັດມາດຕະການໂດຍຕະຫຼາດຫຼັກຊັບຕໍ່ສະມາຊິກ;

3) ການຍົກເລີກ ການເປັນສະມາຊິກ.

**ມາດຕາ 15. ການເປີດເຜີຍຂໍ້ມູນສຸກເສີນ**

ຕະຫຼາດຫຼັກຊັບ ຕ້ອງເປີດເຜີຍຂໍ້ມູນສຸກເສີນທັນທີ ໃນກໍລະນີມີເຫດການໃດໜຶ່ງເກີດຂຶ້ນ ດັ່ງນີ້:

1. ການໂຈະ ຫຼື ອະນຸຍາດໃຫ້ຫຼັກຊັບໃດໜຶ່ງຊື້-ຂາຍຄືນໃໝ່;
2. ຫຼັກຊັບ ທີ່ຖືກແຈ້ງເຕືອນ ຫຼື ຖືກຍົກເລີກການແຈ້ງເຕືອນ;
3. ອັດຕາສ່ວນການຖືຄອງຫຼັກຊັບໂດຍນັກລົງທຶນຕ່າງປະເທດ ແລະ ອັດຕາສ່ວນກໍານົດທີ່ຍັງເຫຼືອທີ່ນັກລົງທຶນຕ່າງປະເທດສາມາດຊື້ໄດ້;
4. ລາຄາຊື້-ຂາຍຂອງຮຸ້ນໃດໜຶ່ງ ຫຼື ທັງໝົດ ທີ່ເພີ່ມຂຶ້ນແຕະເພດານສູງສຸດ ຫຼື ຫຼຸດລົງແຕະເພດານຕໍ່າສຸດ ສາມ ວັນຕິດຕໍ່ກັນ;
5. ການລະເມີດກ່ຽວກັບການເປີດເຜີຍຂໍ້ມູນຂອງບໍລິສັດຈົດທະບຽນ ແລະ ບໍລິສັດຫຼັກຊັບທີ່ເປັນສະມາຊິກ.

ຕະຫຼາດຫຼັກຊັບ ຕ້ອງເປີດເຜີຍຂໍ້ມູນສຸກເສີນ ພາຍໃນ ຊາວສີ່ ຊົ່ວໂມງ ໃນກໍລະນີມີເຫດການໃດໜຶ່ງເກີດຂຶ້ນ ດັ່ງນີ້:

1. ການອອກຮຸ້ນເພີ່ມຂອງບໍລິສັດຈົດທະບຽນໃດໜຶ່ງ;
2. ການປ່ຽນແປງອັດຕາສ່ວນການຖືຮຸ້ນຂອງຜູ້ຖືຮຸ້ນ ທີ່ຖືຮຸ້ນເກີນ ໜຶ່ງສ່ວນຮ້ອຍ ຂອງຈໍານວນຮຸ້ນທັງໝົດຂອງບໍລິສັດຈົດທະບຽນໃດໜຶ່ງ;
3. ການຊື້-ຂາຍຮຸ້ນຂອງສະມາຊິກສະພາບໍລິຫານ, ຄະນະກໍາມະການກວດກາພາຍໃນ, ຄະນະຜູ້ອໍານວຍການ, ຫົວໜ້າບັນຊີ ຫຼື ຫົວໜ້າການເງິນ;
4. ການປະຕິບັດມາດຕະການ ຕໍ່ຜູ້ລະເມີດລະບຽບການທີ່ຕິດພັນກັບວຽກງານຫຼັກຊັບ.

**ມາດຕາ 16. ການເປີດເຜີຍຕາມການຮຽກຮ້ອງ**

ໃນກໍລະນີຈຳເປັນ ສຳນັກງານ ຄລຕ ສາມາດຮຽກຮ້ອງໃຫ້ຕະຫຼາດຫຼັກຊັບເປີດເຜີຍຂໍ້ມູນໃດໜຶ່ງເພີ່ມເຕີມ ນອກຈາກທີ່ໄດ້ກຳນົດໄວ້ໃນມາດຕາ 14 ແລະ 15 ຂອງຂໍ້ຕົກລົງສະບັບນີ້ ເພື່ອປົກປ້ອງຜົນປະໂຫຍດ ຂອງນັກລົງທຶນ ແລະ ຮັກສາສະຖຽນລະພາບ ຂອງຕະຫຼາດທຶນ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 17. ການຈັດຕັ້ງປະຕິບັດ**

ສຳນັກງານ ຄລຕ, ບໍລິສັດອອກຫຼັກຊັບ, ບໍລິສັດຫຼັກຊັບ, ຕະຫຼາດຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນຢ່າງເຂັ້ມງວດ.

**ມາດຕາ 18. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ**